# ຄົນໄກບ້ານ

ຂ້ອຍຜູ້ຄົນພາກບ້ານ    ບ່ອນເກີດຂອງຕົນ
ໄປຢູ່ປົນຊາວເມືອງ    ຕ່າງຊຸມແຊງເຊື້ອ
ໄກຈາກເຄືອກົກເຫງົ້າ    ພູມລຳເນົາບ້ານແມ່
ຄືດັ່ງແພລ່ອງນ້ຳ    ວັງຈັ້ງຈອດບໍ່ມີ

ທຸກເມື່ອ  ຍ້າຍພຸ້ນພີ້    ຊອກຊ່ອນວອນຫາການ
ຊອກເຮັດງານຫາເງິນ    ສູ້ຊົນບໍ່ຢຸດຢັ້ງ
ເອົາກຳລັງກາຍສູ້    ບຶນໂຕບຸກຫນ່ຳ
ຫາຄ່ຳກິນມື້ເຊົ້າ    ທຸເລົາລ້ຽງສືບວັນ

ຢູ່ຕ່າງແດນ    ຊີວິດຫຽ້ງຍາລ້ຳ    ລຳບາກຫນັກຫນາ
ປັນຍາມີແນວປິດ    ກີດກັນຕັນທ້າງ
ຄວາມຮັກຈາງສູນສິ້ນ    ຈິນຕະນາຫາຍເປົ່າ
ແນວເຮືອນເຊົ່າເຂົ້າຊີ້    ທັງຢືນມື້ເພິ່ນນອນ

ດັ່ງນັ້ນ  ຫົວອົກຮຽມເຮັ່ງຮ້ອນ  ຮ້າຍກວ່າມໍຣະສຸມ
ຄືຕົກຫຼຸມນາຮົກ    ຢູ່ຫວ່າງແປວໄຟກ້າ
ນ້ຳຕາໄຫຼລິນຫົ້ງ    ລົງຊວງແສນເອົ້າອັ່ງ
ເລີຍມານັ່ງອ່າວໂອ້    ຄະນຶງບ້ານເກົ່າຫຼັງ

ຄິດເຫັນເດ    ຄິດເຫັນຄາວຢູ່ຢັ້ງ    ບ້ານແມ່ດິນມານດາ  ຮຽມເດ

ຄິດເຖິງນາແຄມຂອງ ທົ່ງພຽງແສນກວ້າງ
ຍູທາງທຳພຽນສ້າງ ຫາກິນສົມສູ່
ຫມູ່ຄູ່ທັງພີ່ນ້ອງ ພຽງພ້ອມຊ່ອຍຊູ

ອັນຫນຶ່ງ ຄິດເຖິງແກ້ວຍອດຊູ້ ຜູ່ເຄີຍຄູ່ຄຽງກັນ
ຄືນໃດຈັນຄາຍແສງ ອ້າຍນັ່ງແຍງນວນນ້ອງ
ນາງເປັນຄົນເຂັນຝ້າຍ ຊາຍຍັງເປັນຄົນແອ່ນ
ເອົາສຽງແຄນກ່ອມເຈົ້າ ຈົນຍາເຊົ້າໄກ່ອ່ານຄອນ ມ່ວນເດ